# ສະຫາຍ ຫງວຽນ ມິງ ຈຽດ ຕ້ອນຮັບຜູ້ນຳລາວເຂົ້າຢ້ຽມຂ່ຳນັບ




ໃນໂອກາດສະຫາຍ ຫງວຽນມິງຈຽດ ປະທານປະເທດ ແຫ່ງ ສ.ສ ຫວຽດ ນາມ ພ້ອມພັນລະຍາ ແລະ ຄະນະ ເດີນທາງມາຢ້ຽມຢາມ ສ.ປ.ປ ລາວ ຢ່າງເປັນທາງການ ໃນຕອນ ເຊົ້າ ວັນ ທີ 24 ສິງຫາ 2010 ນີ້ ແລະ ໃນ ຕອນແລງຂອງວັນດຽວກັນ ສະຫາຍ ຫງວຽນມິງຈຽດ ກໍ່ໄດ້ຕ້ອນຮັບ ຜູ້ນຳພັກ-ລັດ ຂອງ ສ.ປ.ປ ລາວ ເຂົ້າຢ້ຽມຂ່ຳນັບຕາມລຳດັບດັ່ງນີ້: ໄດ້ຕ້ອນຮັບສະຫາຍ ສີສະຫວາດ ແກ້ວ ບຸນພັນ ປະທານສູນກາງແນວລາວສ້າງຊາດ, ສະຫາຍ ທອງສິງ ທຳມະວົງ ປະທານສະພາແຫ່ງ ຊາດ, ສະຫາຍ ບົວສອນ ບຸບຜາວັນ ນາຍົກລັດຖະມົນຕີ, ສະຫາຍ ດຣ. ພັນຄຳ ວິພາວັນ ລັດຖະມົນ ຕີວ່າການກະຊວງສຶກສາທິການ ທັງເປັນປະທານສະມາຄົມມິດຕະພາບລາວ - ຫວຽດນາມ. ໃນໂອ ກາດຕ້ອນຮັບຜູ້ນຳລາວເຮົາຂອງ ສະຫາຍ ຫງວຽນ ມິງ ຈຽດຄັ້ງນີ້ເຊິ່ງກໍ່ໄດ້ສະ ແດງຄວາມປິຕິຍິນ ດີເປັນຢ່າງຍິ່ງ ໃນໂອກາດເດີນທາງມາຢ້ຽມຢາມ ສ.ປ.ປ ລາວ ໃນຄັ້ງນີ້ ເຊິ່ງໄດ້ນຳເອົາໄມຕີຈິດມິດ ຕະພາບອັນດູດດື່ມ, ຄວາມຮັກແພງອັນ ສະຫນິດສະຫນົມຂອງພັກ-ລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ອ້າຍນ້ອງທີ່ມີມູນເຊື້ອຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານລະຫວ່າງ ລາວ-ຫວຽດນາມ ໃຫ້ນັບມື້ແຫນ້ນແຟ້ນ ຍິ່ງໆຂຶ້ນ.